# ທຄຕລ ຮ່ວມມືກັບ ກົມພາສີ ກະຊວງການເງິນ

## ເປີດການນຳໃຊ້ລະບົບ ການຊຳລະຄ່າອາກອນມູນຄ່າເພີ່ມ ເຄື່ອງຕິດຕົວຜູ້ໂດຍສານຂາເຂົ້າ ແລະ ລະບົບຈັດເກັບຄ່າທຳນຽມພາຫະນະ ແລະ ຜູ້ໂດຍສານເຂົ້າ-ອອກ ແບບອີເລັກໂທຣນິກ (Smart VAT 2) ຢ່າງເປັນທາງການ ໃນວັນທີ 17 ມັງກອນ 2020

## ທີ່ດ່ານພາສີສາກົນ ຂົວມິດຕະພາບ I, ນະຄອນຫຼວງວຽງຈັນ

ຈຸດປະສົງແມ່ນເພື່ອສ້າງຄວາມສະດວກສະບາຍໃຫ້ແກ່ປະຊາຊົນຜູ້ຊົມໃຊ້, ຜູ້ເດີນທາງເຂົ້າ-ອອກດ່ານພາສີສາກົນຂົວມິດຕະພາບ I ແລະ ສາມາດຈັດເກັບລາຍຮັບເຂົ້າງົບປະມານລັດຢ່າງຖືກຕ້ອງ, ວ່ອງໄວ, ທັງມີຄວາມໂປ່ງໃສ ແລະ ສາມາດກວດສອບຄືນໄດ້.

ລະບົບດັ່ງກ່າວແມ່ນອຳນວຍຄວາມສະດວກໃຫ້ແກ່ຜູ້ເດີນທາງ ສາມາດລົງທະບຽນເອກະສານປຶ້ມຜ່ານແດນລົດ, ໜັງສືເດີນທາງ, ປຶ້ມຜ່ານແດນຜູ້ໂດຍສານ, ໃບຜ່ານແດນຊົ່ວຄາວ ແລະ ໃບຕິດຕາມການນຳເຂົ້າພາຫະນະຊົ່ວຄາວສຳລັບຄົນຕ່າງປະເທດ, ເຊິ່ງລະບົບຈະຄິດໄລ່ຄ່າທຳນຽມໃຫ້ໂດຍອັດຕະໂນມັດ ໂດຍຜູ້ຊົມໃຊ້ສາມາດຊຳລະຄ່າທຳນຽມດ້ວຍຕົນເອງຫຼາຍຊ່ອງທາງເຊັ່ນ: ດ້ວຍເງິນສົດ, ບັດ ATM ທຄຕລ, ບັດ Smart VAT, BCEL OnePay ແລະ ຜ່ານແອັບພລິເຄຊັນ BCEL One.




ລະບົບດັ່ງກ່າວແມ່ນໄດ້ມີການທົດລອງໃຊ້ມາໄດ້ໄລຍະໜຶ່ງແລ້ວ ໂດຍເລີ່ມທົດລອງເປີດນຳໃຊ້ລະບົບ Smart VAT ຕັ້ງແຕ່ວັນທີ 19/09/2017 ແລະ Smart VAT 2 ຕັ້ງແຕ່ເດືອນ 12/2018 ເປັນຕົ້ນມາ.

ທຄຕລ ແລະ ກົມພາສີ ກໍ່ໄດ້ເອົາໃຈໃສ່ໃນການໂຄສະນາເຜີຍແຜ່ຂໍ້ມູນ ອະທິບາຍ ແນະນຳໃນການນຳໃຊ້ລະບົບ ໃຫ້ກັບປະຊາຊົນໃຫ້ຮັບຮູ້ ແລະ ເຂົ້າໃຈ ຜ່ານສື່ໂຄສະນາຕ່າງໆຢ່າງກວ້າງຂວາງ. ພ້ອມນັ້ນ, ກໍ່ມີພະນັກງານ ທຄຕລ ຄອຍໃຫ້

ຄຳແນະນຳປະຈຳດ່ານ ນັບແຕ່ມື້ເປີດໃຫ້ທົດລອງນຳໃຊ້ຈົນຮອດ ເດືອນ 06/2019 ເຮັດໃຫ້ປະຊາຊົນຜູ້ຊົມໃຊ້ໄດ້ຮັບຮູ້ ແລະ ເຂົ້າໃຈຫຼາຍຂຶ້ນ ທັງມີຄວາມລຶ້ງເຄີຍໃນການນຳໃຊ້ລະບົບຊຳລະດ້ວຍຕົນເອງຜ່ານຕູ້ KIOSK.

ຜ່ານການປະຕິບັດງານເຫັນວ່າ ຂອດບໍລິການມີຄວາມສະດວກ, ວ່ອງໄວ ຫຼຸດເວລາໃນການບໍລິການ, ເພີ່ມຄວາມສະດວກໃຫ້ກັບຜູ້ເດີນທາງ, ສາມາດຈັດເກັບລາຍຮັບເຂົ້າງົບປະມານລັດໃຫ້ເປັນລະບົບທີ່ມີຄວາມຖືກຕ້ອງ ແລະ ທັນເວລາ ສ້າງຄວາມໂປ່ງໃສ ແລະ ສາມາດກວດສອບໄດ້, ຖ້າທຽບໃສ່ໃນປີຜ່ານມາເຫັນວ່າ ການຈັດເກັບຄ່າທຳນຽມຜູ້ໂດຍສານ ໃນປີ 2019 ເພີ່ມຂຶ້ນປະມານ 201% ເມື່ອທຽບໃສ່ປີ 2018; ແລະ ການນຳໃຊ້ບຸກຄະລາກອນເຂົ້າໃນວຽກງານດັ່ງກ່າວ ຫຼຸດລົງປະມານ 25% ເຫັນໄດ້ວ່າ ໃນຊ່ວງໄລຍະທົດລອງໄດ້ຮັບຜົນການຕອບຮັບຈາກສັງຄົມເປັນຢ່າງດີ.

ໃນຕໍ່ໜ້າ ທຄຕລ ແລະ ກົມພາສີ ຈະສືບຕໍ່ຮ່ວມມືກັນໂຄສະນາ ເຜີຍແຜ່ໃຫ້ສັງຄົມໄດ້ຮັບຊາບຢ່າງກວ້າງຂວາງ ແລະ ຈະສືບຕໍ່ຕິດຕາມລະບົບໃຫ້ສາມາດບໍລິການຢ່າງມີຄຸນະພາບ ສາມາດຜັນຂະຫຍາຍການບໍລິການດັ່ງກ່າວສູ່ດ່ານອື່ນໆ ອີກ ເປັນຕົ້ນແມ່ນ ດ່ານພາສີສາກົນບໍ່ເຕັນ ແລະ ດ່ານພາສີສາກົນຂົວມິດຕະພາບ 4 ແລະ ບັນດາດ່ານພາສີສາກົນອື່ນໆໃນຂອບເຂດທົ່ວປະເທດ.

#ລາຍລະອຽດເພີ່ມເຕີ່ມ:

ພິທີດັ່ງກ່າວໄດ້ຈັດຂຶ້ນໃນວັນທີ 17 ມັງກອນ 2020 ທີ່ ດ່ານພາສີສາກົນຂົວມິດຕະພາບ I ພາຍໃຕ້ຫົວຂໍ້ "ພິທີເປີດນຳໃຊ້ລະບົບການຈັດເກັບຄ່າທຳນຽມພາຫະນະ ແລະ ຜູ້ໂດຍສານເຂົ້າ-ອອກ ແບບເອເລັກໂທຣນິກ ແລະ ລະບົບຄຸ້ມຄອງພາຫະນະເຂົ້າ-ອອກຊົ່ວຄາວ (ບ53) ຂອງດ່ານພາສີສາກົນ ຂົວມິດຕະພາບແຫ່ງທີ່ I" ໂດຍການເປັນກຽດເຂົ້າຮ່ວມຂອງ **ທ່ານ ສົມດີ ດວງດີ** ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, **ທ່ານ ອາດສະພັງທອງ ສີພັນດອນ** ຮອງເຈົ້າຄອງນະຄອນຫຼວງວຽງຈັນ, **ທ່ານ ສົມຈິດ ອິນທະມິດ** ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, **ທ່ານ ຄຳມູນ ວິພົງໄຊ** ຮອງລັດຖະມົນຕີກະຊວງພາຍໃນ, ຮັກສາການຫົວໜ້າກົມພາສີ, ຫົວໜ້າດ່ານພາສີສາກົນຂົວມິດຕະພາບ I, **ທ່ານ ພູຂຽງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ ທຄຕລ, ຄະນະດ່ານ, ຄະນະພະແນກ ແລະ ຜູ້ອານວຍການບໍລິສັດຄາປະເສີດຄອມພິວເຕີ ຈຳກັດ ຜູ້ພັດທະນາລະບົບ (ບ53) ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງກໍ່ໄດ້ເຂົ້າຮ່ວມ.









ຂໍ້ມູນຈາກ: ເພຈ ກະຊວງການເງິນ ແລະ ທຄຕລ
ພາບໂດຍ: ທ້າວ ວິໄລສັກ ພິນທະພອນ
ຂຽນຂ່າວໂດຍ: ນາງ ສຸກສາຄອນ ບຸນສະຫວັດທິພັນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la